# ບົດບັນທຶກກອງປະຊຸມສະພາບໍລິຫານໂຄງການ
# ຄັ້ງວັນທີ 30 ມິຖຸນາ 2010 (ໂຄງການ GPAR ແຂວງຫຼວງພະບາງ)

ວັນທີ: 30 ມິຖຸນາ 2010

ເວລາ: 13:00 - 16:30

ສະຖານທີ່: ຫ້ອງປະຊຸມຂອງພະແນກແຜນການ ແລະ ການລົງທຶນແຂວງ

ບັນດາຜູ້ເຂົ້າຮ່ວມ:

| ລາຍຊື່ | ຕໍາແໜ່ງ |
|---|---|
| 1. ທ່ານ. ຄໍາດົວ ເຢຍກົ່ວນໍເຮືວ່າງ | ຮອງເຈົ້າແຂວງ, ປະທານສະພາບໍລິຫານໂຄງການ GPAR ແຂວງຫຼວງພະບາງ ໄລຍະ II |
| 2. ທ່ານ. ເດີກຄ໌ ວາກີເນີຣ໌ | ວ່າການຮອງຜູ້ຕາງໜ້າປະຈໍາປະເທດ, ຫົວໜ້າພະແນກປົກຄອງ, ອົງການ ສປຊ ເພື່ອການພັດທະນາ ປະຈໍາລາວ |
| 3. ທ່ານ ນາງ ວັດລະນາ ບຸບຜາ | ຜູ້ຮັບຜິດຊອບໂຄງການ, ອົງການ ສປຊ ເພື່ອການພັດທະນາ |
| 4. ດຣ. ຄໍາຄ່ອງ ພົມມະປັນຍາ | ອໍານວຍການໂຄງການ GPAR ແຂວງຫຼວງພະບາງ ໄລຍະII |
| 5. ທ່ານ. ບຸນທັນ ສີສຸພັນ | ຜູ້ບໍລິຫານໂຄງການ GPAR ແຂວງຫຼວງພະບາງ ໄລຍະ II |
| 6. ທ່ານ. ນາງ ສີລິພອນ | ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ |
| 7. ທ່ານ. ເອີ້ງ ລໍສະຫວັນ | ຫົວໜ້າພະແນກພະແນກສຶກສາແຂວງ |
| 8. ດຣ. ວຽງສະຫວັນ ກະເສີມສຸກ | ຜູ້ປະສານງານພະແນກສາທາແຂວງ |
| 9. ທ່ານ. ພົມມີ ຍອດສະຫວັດ | ຮອງຫົວໜ້າຄະນະຈັດຕັ້ງແຂວງ |
| 10. ທ່ານ. ບຸນຄ່ອງ | ຜູ້ປະສານງານພະແນກພະແນກການເງິນແຂວງ |
| 11. ທ່ານ. ອີກອນ ເຣລເວີສະໂຄບວ໌ ແມດເຊີນ | ຊ່ຽວຊານປະຈໍາໂຄງການ GPAR ແຂວງຫຼວງພະບາງ |
| 12. ທ່ານ. ສີວັນ ດວງດາຣາ | ຜູ້ຊ່ວຍປະສານງານດ້ານບໍລິຫານໂຄງການ GPAR ແຂວງຫຼວງພະບາງ ໄລຍະ II |
| 13. ທ່ານ. ຄານສິດ ຫຼວງໄຊ | ຜູ້ປະສານງານຈາກຫ້ອງວ່າການປົກຄອງແຂວງ |
| 14. ທ່ານ. ນາງ ບົວວັນ ພົງສະຫວັດ | ພະນັກງານບັນຊີໂຄງການ GPAR ແຂວງຫຼວງພະບາງ II |
| 15. ທ່ານ. ນາງ ມະນີພອນ ສຸພາພອນ | ພະນັກເລຂານຸການໂຄງການ GPAR ແຂວງຫຼວງພະບາງ II |
| 16. ທ່ານ. ບຸນມີ ບຸນໂສມ | ພະແນກງານແປພາສາ, ໂຄງການ GPAR ຫຼວງພະບາງ II |

ເປັນປະທານຮ່ວມໂດຍ: - ທ່ານ. ຄໍາດົວ ເຢຍກົ່ວນໍເຮືວ່າງ
- ທ່ານ. ເດີກຄ໌ ວາກີເນີຣ໌

ຜູ້ບັນທຶກກອງປະຊຸມ: ທ່ານ ສີວັນ ດວງດາລາ

ກອງປະຊຸມສະພາບໍລິຫານໂຄງການປັບປຸງບູລະນະການປົກຄອງ (GPAR) ແຂວງຫຼວງພະບາງ ໄລຍະທີ II ໄດ້ຈັດຂຶ້ນໃນທ້າຍເດືອນມິຖຸນາ ເພື່ອຕອບສະໜອງກັບຄວາມຕ້ອງການຕາມລະບຽບການຄຸ້ມຄອງແຫ່ງຊາດໃນການຈັດຕັ້ງປະຕິບັດໂຄງການໃນໄລຍະໃໝ່. ອີງໃສ່ລະບຽບການດັ່ງກ່າວ, ການສ້າງຕັ້ງສະພາບໍລິຫານໂຄງການ ໄດ້ຮັບຄວາມເປັນເອກະພາບຈາກກົມຮ່ວມມືສາກົນ/ກະຊວງແຜນການ & ການລົງທຶນ ແລະ ອົງການ ສປຊ ເພື່ອການພັດທະນາໃນປີ 2009. ສະພາບໍລິຫານໂຄງການແມ່ນໄດ້ຮັບການສ້າງຕັ້ງຂຶ້ນມາໃໝ່ໆແທນແຕ່ກ່ອນຊຶ່ງເອີ້ນວ່າ (ຄະນະຊີ້ນໍາໂຄງການປັບປຸງບູລະນະການປົກຄອງ) ຊຶ່ງຍັງເປັນຜູ້ຊີ້ນໍາການປັບປຸງບູລະນະການປົກຄອງໃນປະຈຸບັນ.

ກອງປະຊຸມສະພາບໍລິຫານໂຄງການຄັ້ງທໍາອິດ ດ້ວຍການເປັນປະທານຮ່ວມໂດຍ ທ່ານ. ຄໍາດົວ ເຢຍກົ່ວນໍເຮືອ່າງ, ຮອງເຈົ້າແຂວງ ທັງເປັນປະທານສະພາບໍລິຫານໂຄງການ GPAR ແຂວງຫຼວງພະບາງ ແລະ ທ່ານ. ເດີກສ໌ ວາກີເນີຣ໌ ວ່າການຮອງຜູ້ຕາງໜ້າປະຈໍາປະເທດ ທັງເປັນຫົວໜ້າພະແນກປົກຄອງ ອົງການ ສປຊ ເພື່ອການພັດທະນາ ປະຈໍາ ສປປ ລາວ. ມີບັນດາຜູ້ແທນຈາກພະແນກການເປົ້າໝາຍຫຼັກ ພ້ອມທັງພະນັກງານໂຄງການ GPAR ແຂວງຫຼວງພະບາງ ໄລຍະ II ກໍ່ໄດ້ໃຫ້ການເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ (ກະລຸນາເບິ່ງຕາມລາຍຊື່ຂ້າງເທິງນັ້ນ).

ການກ່າວເປີດ
ກອງປະຊຸມດັ່ງກ່າວໄດ້ຮັບການກ່າວເປີດໂດຍທ່ານ ທ່ານ. ຄໍາດົວ ເຢຍກົ່ວນໍເຮືອ່າງ ຊຶ່ງທ່ານໄດ້ໃຫ້ຄໍາຊີ້ແຈງວ່າ ແຜນງານການປັບປຸງບູລະນະການປົກຄອງຢູ່ໃນແຂວງຫຼວງພະບາງແມ່ນໄດ້ພົວພັນໂດຍກົງກັບຍຸດທະສາດສົ່ງເສີມການເຕີບໂຕທາງດ້ານເສດຖະກິດ ແລະ ການລຶບລ້າງຄວາມທຸກຍາກແຫ່ງຊາດ ຊຶ່ງໄດ້ຮັບຮອງເອົາໂດຍສະພາແຫ່ງຊາດໃນເດືອນພະຈິກ 2003. ຍຸດທະສາດການເຕີບໂຕທາງດ້ານເສດຖະກິດ ແລະ ການລຶບລ້າງຄວາມທຸກຍາກແຫ່ງຊາດນັ້ນກໍ່ໄດ້ຮັບການຈັດຕັ້ງຜັນຂະຫຍາຍໂດຍອໍານາດການປົກຄອງແຂວງຫຼວງພະບາງ ອີງໃສ່ສະພາບຈຸດພິເສດ ແລະ ທ່າແຮງບົ່ມຊ້ອນຂອງທ້ອງຖິ່ນ. ເພື່ອບັນລຸໄດ້ຄາດໝາຍດັ່ງກ່າວນັ້ນ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂອງແຂວງກໍ່ໄດ້ຖືກກໍານົດຂຶ້ນ.

ໃນການດໍາເນີນແຜນພັດທະນາເສດຖະກິດ-ສັງຄົມນັ້ນ, ອໍານາດການປົກຄອງແຂວງຫຼວງພະບາງກໍ່ໄດ້ຮັບການສະໜັບສະໜູນດ້ານການເງິນ ແລະ ດ້ານວິຊາການຈາກອົງການ ສປຊ ເພື່ອການພັດທະນາ ແລະ ອົງການຊີດາ. ຍ້ອນການສະໜັບສະໜູນດັ່ງກ່າວ ເຫັນໄດ້ວ່າວຽກງານດ້ານການປົກຄອງກໍ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ. ຕະຫຼອດທັງການຮ່ວມມືກັບບັນດາອົງການຈັດຕັ້ງສາກົນຕ່າງໆ ພວກເຮົາໄດ້ປະຕິບັດຕາມຖະແຫຼງການວຽງຈັນ ວ່າດ້ວຍການຈັດຕັ້ງປະຕິບັດນະໂຍບາຍການຊ່ວຍເຫຼືອທາງການ ເພື່ອການພັດທະນາ ຂອງ ສປປລາວ, ທັງນີ້ກໍ່ເພື່ອເຮັດໃຫ້ການຊ່ວຍມີປະສິດທິຜົນສູງຍິ່ງຂຶ້ນ, ບັນລຸໄດ້ຕາມເປົ້າໝາຍສະຫັດສະວັດດ້ານການພັດທະນາໃນປີ 2015 ແລະ ນໍາເອົາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020. ເລີ້ມແຕ່ປີ 2002 ເປັນຕົ້ນມາ, ອໍານາດການປົກຄອງແຂວງໃນທຸກຂັ້ນກໍ່ໄດ້ທໍາໜ້າທີ່ພາລະບົດບາດຂອງຕົນເປັນເຈົ້າການໃນນໍາພາການຈັດຕັ້ງປະຕິບັດແຜນງານປັບປຸງບູລະນະການປົກຄອງດັ່ງກ່າວ ທັງນີ້ກໍ່ເພື່ອເຮັດໃຫ້ວຽກງານມີປະສິດທິຜົນສູງຂຶ້ນ.

ທ່ານ. ເດີກສ໌ ວາກີເນີຣ໌ ໄດ້ກ່າວໃນຕອນຕົ້ນຂອງການເປີດກອງປະຊຸມ ສະທ້ອນໃຫ້ເຫັນເຖິງຄວາມສໍາຄັນຂອງການປະເມີນຜົນແຜນງານປັບປຸງບູລະນະການປົກຄອງ ແລະ ໄດ້ກ່າວເຖິງໂຄງການ GPAR ແຂວງຫຼວງພະບາງ ວ່າ ແຂວງຂອງພວກເຮົາປະຕິບັດໄດ້ດີທີ່ສຸດ ຖ້າສົມທຽບກັບບັນດາໂຄງການ GPAR ແຂວງອື່ນໆໃນທົ່ວປະເທດ ດ້ວຍຫຼາຍເຫດຜົນເຊັ່ນ: (i) ຄວາມເປັນເຈົ້າການຂອງອໍານາດການປົກຄອງແຂວງ ແລະ ພາກສ່ວນທີ່ມີສ່ວນຮ່ວມອື່ນໆຂອງແຂວງ (ii) ຜົນສໍາເລັດທີ່ມີລະດັບຄວາມຍືນຍົງສູງ ແລະ (iii) ຍ້ອນຄວາມສາມາດຂອງທີມງານໂຄງການ. ສໍາລັບໂຄງການສືບຕໍ່ໂດຍບໍ່ໄດ້ເພີ້ມຈໍານວນງົບປະມານໃນປີ 2010 ນີ້ ແມ່ນໄດ້ສຸມໃສ່ການສ້າງຄວາມໝັ້ນຄົງຈາກຜົນສໍາເລັດຂອງໂຄງການທີ່ບັນລຸໄດ້ໃນໄລຍະ II. ທ່ານ. ເດີກສ໌ ຍັງໄດ້ກ່າວຕື່ມວ່າ ໃນກອງປະຊຸມໂຕະມົນທີ່ຈະໄດ້ຈັດຂຶ້ນໃນເດືອນຕຸລາຂອງປີນີ້ ໂດຍການເຂົ້າຮ່ວມຂອງລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາຕ່າງໆ. ທຸກໆບົດຮຽນທີ່ຖອດຖອນໄດ້ດ້ານດີພວກເຮົາຕ້ອງໄດ້ເກັບກໍາໄວ້ ກ່ອນນໍາສະເໜີຕໍ່ກອງປະຊຸມໂຕະມົນດັ່ງກ່າວ ຊຶ່ງລວມທັງເອກະສານແນວຄວາມຄິດສໍາລັບແຜນງານຂອງ GPAR ໄລຍະຕໍ່ໄປກໍ່ຈະໄດ້ເອົາຂຶ້ນນໍາສະເໜີ.

| ຫົວຂໍ້ປຶກສາຫາລື | ເນື້ອໃນ |
| --- | --- |
| 1. ການອະນຸມັດຂໍ້ກຳນົດພາລະບົດບາດຂອງສະພາບໍລິຫານໂຄງການ.<br><br>• ທ່ານ. ເດີກຄ໌ ອາກີເນີຣ໌<br><br>• ທ່ານ ນາງ ວັດລະນາ ບຸບຜາ<br><br>• ທ່ານ. ຄຳດົວ ເຢຍກົ່ວນໍເຣືອ່າງ | <u>ສະພາບການ:</u><br>- ຮ່າງຂໍ້ກຳນົດພາລະບົດບາດຂອງສະພາບໍລິຫານໂຄງການໄດ້ຖືກນຳສະເໜີໂດຍທ່ານອຳນວຍການໂຄງການ (ດຣ. ຄຳຄ່ອງ). ຢູ່ໃນບົດສະເໜີຂອງທ່ານ ໄດ້ອະທິບາຍໂຄງຮ່າງການຈັດຕັ້ງ, ພາລະບົດບາດ ແລະ ໜ້າທີ່ຂອງບັນດາພາກສ່ວນທີ່ຢູ່ໃນຮ່າງການຈັດຕັ້ງຂອງສະພາດັ່ງກ່າວ. ມາຮອດປະຈຸບັນ, ຮ່າງຂໍ້ກຳນົດດັ່ງກ່າວກໍ່ໃກ້ຈະສົມບູນແລ້ວ. ຊຶ່ງໃນນັ້ນມີປະກອບມີ: ພະແນກການເງິນ, ແຜນການ ແລະ ການລົງທຶນແຂວງ, ພະແນກສຶກສາ ແລະ ພະແນກສາທາແຂວງ. ນອກຈາກນັ້ນ, ກໍ່ຍັງມີຂໍ້ສະເໜີວ່າ ຄວນເອົາຄະນະຈັດຕັ້ງແຂວງເຂົ້າໃນການຈັດຕັ້ງນີ້.<br>- ບໍ່ພຽງແຕ່ສະເພາະໂຄງການ GPAR ແຂວງຫຼວງພະບາງເທົ່ານັ້ນ, ສ່ວນບັນດາໂຄງການ GPAR ແຂວງອື່ນໆກໍ່ມີໂຄງຮ່າງການຈັດຕັ້ງແບບດຽວກັນໂດຍພື້ນຖານແລ້ວ. ສະພາບລິຫານໂຄງການມີໜ້າທີ່ຮັບຜິດຊອບຕົກລົງບັນຫາໃນຄຸ້ມຄອງໂຄງການໂດຍລວມເຊັ່ນ:<br>• ຕົກລົງປະເດັນຕ່າງໆໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ;<br>• ໃຫ້ການຊີ້ນຳເມື່ອມີຄວາມຕ້ອງການຈາກຜູ້ບໍລິຫານໂຄງການ; ແລະ<br>• ຊ່ວຍແກ້ໄຂບັນຫາຂອງໂຄງການ (ໃນກໍລະນີເກີນກຳນົດເວລາ ແລະ ເກີນງົບປະມານ)<br>- ຂໍ້ກຳນົດພາລະບົດບາດຂອງສະພາບໍລິຫານໂຄງການແມ່ນໃຊ້ໃຫ້ເປັນຂໍ້ກຳມາດຕະຖານໃນບັນດາໂຄງການ GPAR ແຂວງອື່ນໆ, ກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດຈະແຈ້ງ, ລວມທັງພາກສ່ວນຜູ້ໄດ້ຜົນປະໂຫຍດ, ພະແນກການໃດທີ່ມີຄວາມເໝາະສົມກໍ່ສາມາດບັນຈຸເຂົ້າໄດ້, ໝາຍຄວາມວ່າບໍ່ສະເພາະມີພຽງແຕ່ພະແນກການເງິນ, ແຜນການ & ການລົງທຶນ, ສາທາ ແລະ ພະແນກສຶກສາຕາມທີ່ໄດ້ລະບຸໄວ້ເທົ່ານັ້ນ.<br>- ຂໍ້ກຳນົດພາລະບົດບາດລວມມີ 3 ພາກສ່ວນຫຼັກຢູ່ໃນໂຄງຮ່າງການຈັດຕັ້ງຂອງສະພາບໍລິການໂຄງການ ມີຄື:<br>• ພາກສ່ວນສະໜອງການສະໜັບສະໜູນ (ອົງການ ສປຊ ເພື່ອການພັດທະນາ/ອົງການຊີດາ);<br>• ພາກບໍລິຫານໂຄງການ (ຫ້ອງວ່າການປົກຄອງແຂວງ/ປະທານສະພາບໍລິຫານໂຄງການ);<br>• ພາກສ່ວນໄດ້ຮັບຜົນປະໂຫຍດ (ພະແນກການເງິນ, ແຜນການ & ການລົງທຶນ, ສຶກສາ ແລະ ສາທາແຂວງ).<br>- ໂດຍພື້ນຖານແລ້ວ, ທ່ານ. ຄຳດົວ ກໍ່ເຫັນດີເປັນເອກະພາບຕາມຮ່າງຂໍ້ກຳນົດດັ່ງກ່າວ, ແຕ່ຕ້ອງໄດ້ປັບປຸງໃຫ້ມັນມີປະສິດທິພາບຂຶ້ນຕື່ມ, ຕ້ອງໄດ້ສ້າງໃຫ້ເປັນລະບຽບຫຼັກການ, ເນື່ອງຈາກຮ່າງຂໍ້ກຳນົດດັ່ງກ່າວ |

| | |
|---|---|
| | ຕ້ອງໄດ້ເຊັນໂດຍການຈັດຕັ້ງທີ່ກ່ຽວຂ້ອງ (ໂດຍແມ່ນທະບວງການປົກຄອງ & ຄຸ້ມຄອງລັດຖະກອນ/ໂຄງການ GPAR ສູນກາງ ຫຼື ໂດຍທ່ານເຈົ້າແຂວງ). |
| • ທ່ານ. ເດີກຄ໌ ອາກິເບີຣ໌ | - ຂໍ້ກຳນົດດັ່ງກ່າວ, ທ້ອງຖິ່ນສາມາດລົງລາຍເຊັນໄດ້ ຕະຫຼອດທັງສະມາຊິກຂອງສະພາກໍ່ສາມາດກຳນົດຕາມຄວາມເໝາະສົມຂອງທ້ອງຖິ່ນຂອງຕົນ. ຖ້າມີຫຼາຍພາກສ່ວນເກີນໄປມັນກໍ່ຈະເປັນການຫຍຸ້ງຍາກໃນຈັດກອງປະຊຸມໃຫ້ມີສິດທິພາບ. |
| 2. ດ້ານງົບປະມານຂອງໂຄງການ (ສຳລັບ 6 ເດືອນຕົ້ນປີ ແລະ 6 ເດືອນທ້າຍປີ) | - ອີງການ ສປຊ ເພື່ອການພັດທະນາໄດ້ໃຫ້ຄຳແນະນຳ:<br>a.) ນຳໃຊ້ທຶນຮອນທີ່ມີໃຫ້ໝົດ ແຕ່ບໍ່ໃຫ້ເກີນຂອບເຂດງົບປະມານລວມທີ່ມີ;<br>b.) ທົບທວນຄືນແຜນການ ແລະ ງົບປະມານປະຈຳປີ ອີງຕາມແຜນການ ແລະ ງົບປະມານທີ່ມີ;<br>c.) ນຳໃຊ້ຮ່ວງທຶນຂອງຊີດາໃຫ້ໝົດກ່ອນວັນທີ 30 ມິຖຸນາ 2010ນີ້;<br>d.) ທົບທວນການໃຊ້ຈ່າຍງົບປະມານຂອງໂຄງການຄືນໃນ 6 ເດືອນຕົ້ນປີ ລາຍລະອຽດມີຫຍັງແດ່;<br>e.) ກະກຽມຈັດກອງປະຊຸມເພື່ອປຶກສາຫາລືກ່ຽວກັບງົບປະມານ 6 ເດືອນທ້າຍປີ. |
| 3. ການກ່າວປິດ | - ທ່ານ. ຄຳດົວ ໄດ້ກ່າວຊີ້ແຈ້ງໃນຕອນປິດກອງປະຊຸມວ່າ ຮ່າງຂໍ້ກຳນົດພາລະບົດບາດຂອງສະພາບໍລິຫານໂຄງການດັ່ງກ່າວກໍ່ແມ່ນດີແລ້ວ, ແຕ່ຕ້ອງໄດ້ປັບປຸງຕື່ມ ແລະ ເຮັດໃຫ້ເປັນອັນສະເພາະສຳລັບໂຄງການ GPAR ແຂວງຫຼວງພະບາງ ແລະ ລົງລາຍເຊັນໂດຍທ່ານເຈົ້າແຂວງ. ທ່ານໄດ້ໃຫ້ຄຳຊີ້ນຳສະເພາະຕື່ມວ່າ:<br>a.) ຄວນສຸ່ມສະເພາະໃສ່ໃນດ້ານພັດທະນາຊັບພະຍາກອນມະນຸດໃນຂັ້ນແຂວງ, ຂັ້ນເມືອງ ຕະຫຼອດເຖິງຂັ້ນບ້ານຕື່ມ;<br>b.) ສືບຕໍ່ປະຕິບັດບັນດາກິດຈະກຳຂອງໂຄງການໃນ 6 ເດືອນທ້າຍປີໃຫ້ມີປະສິດທິຜົນ;<br>c.) ທົບທວນການໃຊ້ຈ່າຍງົບປະມານໃຫ້ລະອຽດຕື່ມ;<br>d.) ສືບຕໍ່ກິດຈະກຳທີ່ຍັງບໍ່ທັນໄດ້ປະຕິບັດໃຫ້ສຳເລັດ;<br>e.) ນຳໃຊ້ມາດຕະການຕ່າງໆເພື່ອເຮັດໃຫ້ໂຄງການມີຄວາມຍືນຍົງ;<br>f.) ເກັບກຳເອກະສານທີ່ເປັນບົດຮຽນຖອດຖອນໄດ້ທັງໝົດ ເພື່ອສືບຕໍ່ໂຄງການ;<br>g.) ຮັກສາທີມງານຄູຝຶກຂອງໂຄງການໄວ້ໂດຍທັງໝົດ ຫຼື ແຕ່ງຕັ້ງທີມງານຄູຝຶກປ່ຽນແທນໃໝ່;<br>h.) ດຳເນີນການຖອດຖອນບົດຮຽນກັບເມືອງຢ່າງປົກກະຕິ ແລະ ສືບຕໍ່ປະຕິບັດການປັບປຸງບູລະນະການປົກຄອງໃຫ້ໄດ້ດີທີ່ສຸດ. |

ສະພາບໍລິຫານງານໂຄງການ

ແຂວງ ຫລວງພະບາງ
ໂຄງການ ປັບປຸງບູລະນະການປົກຄອງ
GPAR
ຫ້ອງວ່າການປົກຄອງແຂວງ

ບົວພັນ ໝັ້ນມະນີວົງ

Bouaphanh MANMANIVONG

# MINUTES OF PB MEETING 30 JUNE 2010
# (GPAR LP II)

Date: 30 June 2010
Time: 13:00 - 16:30
Venue: Department of Planning & Investment Office Meeting room

Participants:

| Name | Title |
|---|---|
| 1. Mr. Khamdua Yiakuanorhervang | Vice-Governor, Chair of LCPAR |
| 2. Mr. Dirk Wagener | Deputy Resident Representative(p) a.i., Head of Governance Unit, UNDP |
| 3. Ms. Vatlana Boupha | Programme Analyst, UNDP |
| 4. Dr. Khamkhong Phommapanya | National Project Director |
| 5. Mr. Bounthanh Sisouphanh | Project Manager, GPAR LP II |
| 6. Ms. Siliphone | Deputy-Director, DPI |
| 7. Mr. Eung Lorsavanh | Director, Department of Education |
| 8. Dr. Viengsavanh Kaseumsouk | Coordinator, Department of Public Health |
| 9. Mr. Phommee Gnotsavath | Deputy-Director, PCOP |
| 10. Mr. Bounkhong | Coordinator, Department of Finance |
| 11. Mr. Egon Helverskov Madsen | Project Support Coordinator, GPAR LP II |
| 12. Mr. Sivanh Douang Dara | Assistant Project Support Coodinator, GPAR LP II |
| 13. Mr. Khansith Luangxay | OoG Coordinator |
| 14. Ms. Bouavanh Phongsavath | Project Accountant, GPAR LP II |
| 15. Ms. Maniphone Souphaphone | Project Secretary, GPAR LP II |
| 16. Mr. Bounmy Bounsome | Project Translator, GPAR LP II |

Co-chairperson: - Mr. Khamdua Yiakuanorhervang
- Mr. Dirk Wagener

The First Project Board meeting for GPAR LP II took place in late June in Luang Prabang to respond to new NIM regulations requirements. Based on those regulations, the establishment of the PB has been jointly agreed by DIC/MPI and UNDP in 2009. PB, the newly set up Board, replaced the previous LCPAR (Leading Committee for public Administration Reform) who still led the current reform.

This First PB Meeting was jointly chaired by Mr. Khamdua Yiakuanorhervang, Vice-Governor of Luang Prabang Province and Chair of LCPAR and Mr. Dirk Wagener, Deputy Resident Representative (P) a.i., UNDP in Laos and Head of Governance Unit. Representatives of key target Departments and GPAR LP Project team participated in the First PB Meeting (See the list above).

**Opening remarks**

The First PB Meeting was opened by Mr. Khamdua Yiakuanorhervang. In his opening address, Mr. Khamdua pointed out that the GPAR Programme in Luang Prabang has been directly related to the National Growth and Poverty Eradication Strategy (NGPES) approved by the National Assembly in November 2003. The NGPES has been rolled-out by Luang Prabang Provincial Administration following the local specifics and potentials. To do so, the five years socio-economic development plan (2006-2010) of the province has been set up.

In carrying out the NGPES, Luang Prabang Administration was financially and technically supported by GPAR LP Project financed by Sida and UNDP. With this support some improvements have been made within the administrative sector. Throughout the cooperation with international agencies, we followed the Vientiane Declaration on Aid Effectiveness (VDAE), so as to make assistance be highly effective, reach the MDGs by the year 2015 and bring the country out from the group of least developed countries by the year 2020. Since 2002, the Provincial Administration at all levels have taken their ownership role in leading the implementation of the reform programme, so as to make it more effective.

Mr. Dirk Wagener, in his opening address, reflected on the importance of the recently completed evaluation of the GPAR Programme and mentioned that GPAR LP Project was the best among all GPAR Projects in the country for many reasons, such as: (i) Ownership by Provincial Administration and other provincial stakeholders, (ii) High level of sustainability of achievement, and (iii) Capacity of the Project team. The 2010 no-cost extension focused on the consolidation of what has been achieved in Phase II of the Project. In relation to the future GPAR Programme, Mr. Dirk pointed out that the Round Table meeting on governance will be taken place in October this year with participation of Government as well as Development Partners. All the good lessons learned need to be gathered before and presented at the Round Table Meeting, where also the Concept Note for a new phase of GPAR will be presented.

| Topics of discussion | Description |
|---|---|
| **1. TOR for Project Board approval.** | <u>Status:</u><br>- Draft of TOR for Project Board has been presented by the National Project Director (Dr. Khamkhong). In his presentation, Dr. Khamkhong outlined the structure of the Board, function and tasks of the parties within the structure. As TOR is draft so far, it should be finalized. In addition, it was proposed to add PCOP to the number of members of the Beneficiaries which included DoF, DPI, DoH and DoE. |
| • **Mr. Dirk Wagener** | - All GPAR Projects have the same basic PB TOR and same structure, not only GPAR LP. PB is responsible for making by consensus management decisions for the Project:<br>• Decision points during the implementation of the Project;<br>• When guidance is required by the GPAR LP Project Manager; and<br>• When Project tolerances (normally in terms of time and budget) have been exceeded. |
| • **Ms. Vatlana Boupha** | - TOR is a standard TOR used by other GPAR Projects, clear function and responsibilities have been outlined. With regards to the Beneficiaries, any Department could join as suitable, not only DoF, DPI, DoH and DoE as mentioned. |
| • **Mr. Khamdua Yiakuanorhervang** | - TOR is suitable to include 3 main parties in the structure:<br>• Senior Supplier (Sida/UNDP);<br>• Executive (OoG/Chair of LCPAR);<br>• Beneficiary (DoF/DPI/DoE/DoF).<br><br>- Basically, Mr. Khamdua agreed with draft TOR, but it needs to be updated and in order to make it more effectively use, |

| | |
|---|---|
| | rules & regulations need to be established, so as TOR must be signed by involved organizations (PACSA/GPAR SBSD or by the Governor). |
| • **Mr. Dirk Wagener** | - TOR could be signed locally as well as Beneficiary members could be identified locally as suitable. A big number of members will make it difficult to effectively organize the meeting. |
| **2. Project budget (First six months & next six months activities programme)** | - UNDP advised:<br>a.) To use all the funds available but not exceed the overall budgetary framework;<br>b.) To review Annual Work Plan and budget as a results based work plan and budget;<br>c.) to spend Sida fund before 30 June 2010;<br>d.) to review first six months budget expenditure in detail;<br>e.) to organize separate meeting to discuss on last six months budget; |
| **3. Closing remarks** | - Mr. Khamdua, in his closing remarks, pointed out that the draft TOR is good, but it needs to be updated and to make specifically for GPAR LP and signed by the Governor. Mr. Khamdua advised on the way forward that:<br>a.) Special focus should be given to HR development at provincial, district and village level;<br>b.) Continue, effectively, the last six month activities programme;<br>c.) Review the budget expenditure with more detail;<br>d.) Continue the activities not yet carried out;<br>e.) Take measures for sustainability;<br>f.) Gather all lesson learning documents for Project continuation;<br>g.) Keep all trainer teams or to set up new trainer team;<br>h.) Conduct regular lesson learning by district and continue the best GPAR practice. |

Approved by:

Mr. Bouaphanh Manmanivong
LCPD/GPAR LP II.

ໂຄງການ
ປັບປຸງການຄຸ້ມຄອງບໍລິຫານລັດ
GPAR

ບົວພັນ ໝັ້ນມະນີວົງ
Bouaphanh MANMANIVONG